ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ( ຄຄຊ)
(ຫ້ອງການ ຄຄຊ)

**National Regulatory Authority**
**for UXO/Mine Action Sector in Lao PDR (NRA)**
**(NRA Office)**

ເລກທີ:007/ຄຄຊ. ຫກ
ນະຄອນຫຼວງວຽງຈັນ, ວັນທີ: 7 / 01 / 2011

## ກອງປະຊຸມກຸ່ມວິຊາການຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ
## ກອງປະຊຸມໄດ້ຈັດຂຶ້ນໃນເວລາ8:30 ໂມງເຊົ້າ ເຖິງ 12ໂມງເຊົ້າ, ໃນວັນທີ 29 / 11 / 2010 ທີ່ຫ້ອງປະຊຸມ ຄຄຊ.

***<u>ວາລະກອງປະຊຸມທີ 1</u>*** (ເປີດພິທີກອງປະຊຸມ) ໂດຍທ່ານ ຮອງ ຫົວໜ້າຫ້ອງການ ຄຄຊ ໄດ້ກ່າວຍິນດີ ຕ້ອນຮັບແຂກ ແລະ ເປີດກອງປະຊຸມຢ່າງເປັນທາງການ.

***<u>ວາລະກອງປະຊຸມທີ 2</u>*** (ບົດບັນທຶກກອງປະຊຸມທີ່ຜ່ານມາ) ທ່ານຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ລາຍງານກ່ຽວກັບກອງປະຊຸມທີ່ຜ່ານມາ ເປັນຕົ້ນແມ່ນ; ໄດ້ມີການປຶກສາຫາລືກັນກັບ ບັນດາຜູ້ປະຕິບັດງານໃນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ. ຄວາມຄືບໜ້າການລາຍງານອຸປະຕິເຫດຂອງບ້ານທີ່ຍັງຄ້າງຈາກຜູ້ປະສານງານ ຮສສແຂວງ, ເມືອງ ແລະ ການລາຍງານຂໍ້ມູນໄລຍະ 2ໃສ່ໃນລະບົບຖານຂໍ້ມູນຂອງຫ້ອງການ ຄຄຊ. ພ້ອມທັງ ການສະໜອງປຶ້ມບົດລາຍງານການສຳຫຼວດແຫ່ງຊາດໄລຍະ 1 ທັງພາກພາສາລາວ ແລະ ພາສາອັງກິດໃຫ້ແກ່ບັນດາພາກລັດ ແລະ ຜູ້ປະຕິບັດງານ. ພ້ອມແຜນວຽກຂອງບັນດາຜູ້ປະຕິບັດງານ ທີ່ຈະປະຕິບັດ ແລະໄດ້ລາຍງານໃຫ້ຮູ້ລະບົບການຕິດຕາມຜູ້ຫຼອດຊີວິດຈາກ ລບຕ ໃນປີ 2011. ການນຳສະເໜີກ່ຽວກັບນະໂຍບາຍຊ່ວຍເຫຼືອການປິ່ນປົວຂັ້ນພື້ນຖານ ແລະ ຈັດຕຽມພາຫະນະເພື່ອນຳສົ່ງຜູ້ປະສົບເຄາະຮ້າຍຈາກ ລບຕ ຂອງໂຄງການ ເອເອອາ ທີ່ປະຕິບັດວຽກຢູ່ 6ເມືອງ ໃນແຂວງຊຽງຂວາງ ເປັນໄລຍະ 3ປີ.

***<u>ວາລະກອງປະຊຸມທີ 3</u>*** **(ການລາຍງານຄວາມຄືບໜ້າວຽກງານຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ)**
ທ່ານຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ກ່າວວ່າ; ຂໍ້ມູນອຸປະຕິເຫດ ແລະ ຜູ້ປະສົບເຄາະຮ້າຍໄລຍະ 2 ແມ່ນໄດ້ຖືກປ້ອນໃສ່ໃນລະບົບຖານຂໍ້ມູນຂອງ ຄຄຊ ແລະ ຖ້າພາກສ່ວນໃດຫາກຕ້ອງການຂໍ້ມູນດັ່ງກ່າວເພື່ອນຳໄປປະຕິບັດໃນໜ້າທີ່ວຽກງານ ແມ່ນສາມາດຕິດຕໍ່ມາຍັງຫ້ອງການ ຄຄຊ. ລະບົບການຕິດຕາມຜູ້ຫຼອດຊີວິດຈາກ ລບຕ. ຈຸດປະສົງ, ເພື່ອໃຫ້ຜູ້ຫຼອດຊີວິດນັ້ນ ມີຄວາມສະດວກໃນການຮັບການບໍລິການທີ່ມີໃນປະຈຸບັນ ແລະ ເພື່ອກຳນົດວ່າການບໍລິການໃດທີ່ຍັງບໍ່ສາມາດຕອບສະໜອງພຽງພໍ ຫຼືວ່າບໍ່ມີເລີຍ. ຍັງໄດ້ໃຫ້ຮູ້ເຖິງຈຳນວນຜູ້ປະສົບເຄາະຮ້າຍຈາກ ລບຕ ທົ່ວປະເທດໃນປີ 2010 ມີຈຳນວນ 81ຄົນ. ໃນນັ້ນ, ໄດ້ຮັບບາດເຈັບ 57ຄົນ, ເສຍຊີວິດ 24ຄົນ, ເດັກນ້ອຍບາດເຈັບ 33ຄົນ, ເດັກນ້ອຍເສຍຊີວິດ 13, ຜູ້ໃຫ່ຍບາດເຈັບ 25ຄົນ, ຜູ້ໃຫ່ຍເສຍຊີວິດ 12ຄົນ.

***<u>ວາລະກອງປະຊຸມທີ 4</u>*** (ແຜນວຽກປະຈຳປີ 2011) ທ່ານຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ລາຍງານໃຫ້ຮູ້ກ່ຽວກັບ ລະບົບຕິດຕາມຜູ້ຫຼອດຊີວິດຈາກ ອຸປະຕິເຫດ. ສືບຕໍ່ເກັບກຳຂໍ້ມູນອຸປະຕິເຫດ ແລະ ຜູ້ຖືກເຄາະຮ້າຍທີ່ເກີດຂຶ້ນໃໝ່. ຈັດກອງປະຊຸມປຶກສາຫາຫລື ກັບອຳນາດການປົກຄອງຂັ້ນເມືອງ, ຂັ້ນບ້ານ ກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ອຳນາດການປົກຄອງທ້ອງຖິ່ນໃນບັນດາແຂວງ, ເມືອງ, ບ້ານທີ່ມີຜົນກະທົບຈາກ ລບຕ. ຈັດກອງປະຊຸມຝຶກອົບຮົມໃຫ້ແກ່ອົງການປະຕິບັດງານໃນການນຳໃຊ້ແບບຟອມລາຍງານຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ. ສ້າງກອງທຶນບໍລິຈາກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ(ຖ້າເປັນໄປໄດ້).

*ວາລະກອງປະຊຸມທີ່ 5* **(ລະບົບການຕິດຕາມຜູ້ຫຼອດຊີວິດຈາກ ລບຕ)** ທ່ານຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ກ່າວວ່າ; ການສ້າງລະບົບຕິດຕາມຫາຜູ້ຫຼອດຊີວິດແມ່ນຈະຖືເອົາຄະນະກຳມະການຂັ້ນເມືອງເປັນຜູ້ເກັບກຳຂໍ້ມູນລາຍລະອຽດໂດຍການສະໜັບສະໜູນຈາກໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຫ້ອງການ ຄຄຊ. ພ້ອມທັງຂັ້ນຕອນໃນການຈັດຕັ້ງປະຕິບັດ:

1. ການອອກແບບຟອມ ໂດຍຈະປຶກສາຫາລືກັບບັນດາອົງການທີ່ກ່ຽວຂ້ອງ.
2. ຝຶກອົບຮົມໃຫ້ບັນດາຄະນະກຳມະການຂັ້ນເມືອງເພື່ອຮັບຮູ້ລະບົບຕິດຕາມຂໍ້ມູນລາຍລະອຽດຜູ້ຫຼອດຊີວິດຈາກ ລບຕ ຕາມຂໍ້ມູນທີ່ໄດ້ຈາກການສຳຫຼວດ ຂອງຫ້ອງການ ຄຄຊ.
3. ໃຫ້ຄະນະກຳມະການແຕ່ງຕັ້ງຜູ້ປະສານງານເພື່ອລົງເກັບກຳລາຍລະອຽດຜູ້ທີ່ຫຼອດຊີວິດ ເພື່ອເອົາມາວິເຄາະ ແລະ ຕອບສະໜອງໃຫ້ແກ່ບັນດາອົງການປະຕິບັດງານ ທີ່ກ່ຽວຂ້ອງ.
4. ແຕ່ລະປີຄະນະກຳມະການຂັ້ນເມືອງ ຈະເປັນຜູ້ຕິດຕາມບັນດາຜູ້ຫຼອດຊີວິດ ເພື່ອຮັບປະກັນວ່າແຕ່ລະຄົນໄດ້ຮັບການຊ່ວຍເຫຼືອ.

*ວາລະກອງປະຊຸມທີ່ 6* **(ການສະເໜີນະໂຍບາຍຂອງອົງການກາແດງປະຈຳລາວ)** ທ່ານຜູ້ຕາງໜ້າຈາກອົງການກາແດງປະຈຳລາວ ໄດ້ນຳສະເໜີກ່ຽວກັບປະຫວັດຄວາມເປັນມາໃນການສ້າງຕັ້ງອົງການກາແດງ ໂດຍສະເພາະກໍແມ່ນການລິເລີ່ມປະຕິບັດອົງການກາແດງປະຈຳລາວຂຶ້ນ ຊຶ່ງແມ່ນອົງການຈັດຕັ້ງທາງສັງຄົມແຫ່ງ ສປປ ລາວ ໂດຍພາຍໃຕ້ການຊີ້ນຳຂອງພັກ ແລະ ລັດຖະບານ ໂດຍກົງ ຊຶ່ງມີພາລະບົດບາດເປັນຕົ້ນຄື:

1. ຊ່ວຍໜູນລັດຖະບານໃນວຽກງານບັນເທົາທຸກຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ ແລະ ຜູ້ທຸກຍາກດ້ອຍໂອກາດ.
2. ຊ່ວຍປົກປັກຮັກສາ ແລະ ສົ່ງເສີມສຸຂະພາບປະຊາຊົນບັນດາເຜົ່າໃຫ້ມີຊີວິດທີ່ດີຂື້ນ.
3. ປຸກລະດົມຂົນຂວາຍທຸກຊັ້ນຄົນໃນສັງຄົມໃຫ້ມີນ້ຳໃຈມະນຸດສະທຳເພື່ອສະລະວັດຖຸປັດໃຈປະກອບສ່ວນ ເຂົ້າໃນວຽກງານມະນຸດສະທຳ ຕາມ 7 ຫລັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນ ກາແດງສາກົນວາງອອກ.

ປະຈຸບັນອົງການ ກາແດງ ລາວໄດ້ມີ 17ສາຂາແຂວງທົ່ວປະເທດ ແລະ ຢູ່ແຕ່ລະສາຂາ ກໍໄດ້ຈັດຕັ້ງປະຕິບັດກິດຈະກຳຫຼັກເຊັ່ນວ່າ; ກິດຈະກຳປຸກລະດົມຂົນ ຂວາຍຫາຜູ້ບໍລິຈາກເລືອດແບບສະໝັກໃຈ ແລະ ສະໜອງເລືອດທີ່ປອດໄພ, ຊ່ວຍເຫຼືອບັນເທົາທຸກແກ່ປະຊາຊົນທີ່ປະສົບເຄາະຮ້າຍ, ໄພພິບັດ ແລະ ການຍ້າຍຖິ່ນຖານໃໝ່, ສົ່ງເສີມວຽກງານສຸຂະພາບຊຸມຊົນເຊັ່ນ: ຈັດຫາ ແລະ ສະໜອງນ້ຳສະອາດ, ວິດຖ່າຍ, ສຸຂະອະນາໄມ, ໂຄງການໂລກເອດ, ຝຶກອົບຮົມ ແລະ ສ້າງອາສາສະໝັກກາແດງ, ໂຄສະນາເຜີຍແຜ່ພາລະບົດບາດອົງການກາແດງລາວໃຫ້ສັງຄົມຮັບຮູ້ ແລະ ກິດຈະກຳອື່ນໆ. ອົງການກາແດງລາວຍັງໄດ້ສ້າງອາສາສະໝັກໄວໜຸ່ມທົ່ວປະເທດໄດ້ປະມານ 1.200ຄົນ ບາງອາສາສະໝັກກໍໄດ້ສົ່ງໄປຮ່ວມກິດຈະກຳ, ແລກປ່ຽນບົດຮຽນ ແລະ ຝຶກອົບຮົມຢູ່ຕ່າງປະເທດເຊັ່ນ: ຍີ່ປຸ່ນ, ຫວຽດນາມ ໄທ, ມາເລເຊຍ ແລະ ສິງກາໂປ.

ຍັງໄດ້ໃຫ້ຮູ້ເຖິງບັນດາປະເທດທີ່ໃຫ້ການຊ່ວຍເຫຼືອ ແລະ ປະຕິບັດວຽກງານກາແດງຢູ່ໃນປະເທດລາວເຊັ່ນ: ສະພາກາແດງເດັນມາກ, ສະພາກາແດງ ສະວິດ, ສະພາກາແດງ ຝຣັ່ງ, ສະພາກາແດງ ອົດສຕາລີ, ສະພາກາແດງ ໂອສຣິດ, ສະພາກາແດງເຢຍລະມັນ ແລະ ສະພາກາແດງ ເນເທີແລນ. ໃນນັ້ນ, ຍັງໄດ້ສ້າງກອງທຶນຜູ້ທຸກຈົນຕາມພາລະບົດບາດຢູ່ໃນແຂວງຕ່າງໆ;

1. ພາກເໜືອໂດຍການສະໜັບສະໜູນຂອງ (ທະນາຄານໂລກ ແລະ ກະຊວງສາທາ) ມີ: ແຂວງຫຼວງພະບາງ(ເມືອງນ້ຳບາກ, ເມືອງວຽງຄຳ), ແຂວງຊຽງຂວາງ(6ຕົວເມືອງ), ແຂວງອຸດົມໄຊ(7ຕົວເມືອງ), ແຂວງໄຊຍະບູລີ(ກຳລັງຈັດຕັ້ງປະຕິບັດ).
2. ພາກກາງໂດຍການສະໜັບສະໜູນຂອງ (ລຸກຊຳບວກ) ມີ: ແຂວງບໍລິຄຳໄຊ, ແຂວງຄຳມ່ວນ ແລະ ແຂວງວຽງຈັນ
3. ພາກໃຕ້ໂດຍການສະໜັບສະໜູນຂອງ (ທະນາຄານໂລກ, ກາແດງສະວິດ ແລະ ກະຊວງສາທາ) ມີ: ແຂວງ ສະຫວັນນະເຂດ (ເມືອງເຊໂປນ, ເມືອງພະລານໄຊ ແລະ ເມືອງຈຳພອນ), ແຂວງຈຳປາສັກ(ເມືອງສຸຂຸມມາ), ແຂວງເຊກອງ(4ຕົວເມືອງ) ແລະ ແຂວງສາລະວັນ(ເມືອງຕະໂອ້ຍ).

*ວາລະກອງປະຊຸມທີ່ 7* **(ບັນຫາອື່ນໆທີ່ຍົກຂຶ້ນມາໃນກອງປະຊຸມ)** ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໄດ້ລາຍງານທີ່ກອງປະຊຸມ ການເກີດອຸປະຕິເຫດຢູ່ ບ້ານ ທ່າສາລາ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ຊຶ່ງໄດ້ຮັບບາດເຈັບ 01ຄົນ ,ເສຍຊີວິດ 01ຄົນ ໃນລະຫວ່າງຈັດກອງປະຊຸມລັດພາຄີຄັ້ງທຳອິດ ກ່ຽວກັບລະເບີດລູກຫວ່ານຂື້ນທີ່ ນະຄອນຫຼວງວຽງຈັນໃນເດືອນ 11 ປີ 2010. ແລະຍັງປຶກສາຫາລາກັບຜູ້ຕາງໜ້າຈາກອົງການ ເວີດສອີດູນເຄຊັນ ທີ່ມາຮ່ວມກອງປະຊຸມ ໃນຄັ້ງນີ້ກ່ຽວກັບນະໂຍບາຍ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕໃນກໍລະນີທີ່ບໍ່ສາມາດຮັບການປິ່ນປົວໄດ້ຢູ່ພາຍໃນປະເທດ.

ທ່ານຜູ້ຕາງໜ້າຈາກພະແນກຟື້ນຟູສຸຂະພາບຈິດໂຮງໝໍມະໂຫສົດໄດ້ໃຫ້ທັດສະນະວ່າ; ຜູ້ທີ່ຫຼອດຊີວິດຈາກ ລບຕ ແມ່ນໄດ້ຮັບການປິ່ນປົວທາງດ້ານຮ່າງກາຍ ແຕ່ຢາກໃຫ້ເບິ່ງໃນເລື່ອງຂອງສຸຂະພາບຈິດນຳ ເພາະວ່າຜູ້ປະສົບເຄາະຮ້າຍອາດຈະຍັງ ຕ້ອງການຄວາມຊ່ວຍທາງດ້ານນີ້ຕື່ມອີກ.

ທ່ານຜູ້ຕາງໜ້າຈາກກະຊວງສາທາໄດ້ແຈ້ງໃຫ້ຮູ້ວ່າ; ທາງກະຊວງສາທາຈະມີການຈັດການຝຶກອົບຮົມກ່ຽວກັບການຟື້ນຟູ ສຸຂະພາບຈິດ ແລະ ການດູແລເບິ່ງແຍງຜູ້ສູອາຍຸ ທີ່ຈະຈັດຂຶ້ນໃນເດືອນ12 ປີ2010.

ທ່ານຮອງ ຫົວໜ້າຫ້ອງການ ຄຄຊ ໄດ້ລາຍງານໃຫ້ຮູ້ກ່ຽວກັບ ໂຄງຮ່າງການຈັດຕັ້ງຜູ້ປະສານງານແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວຂັ້ນແຂວງ ຢູ່ໃນ 10ແຂວງຄື: ພາກເໜືອ 03ແຂວງ, ພາກກາງ 03ແຂວງ ແລະ ພາກໃຕ້ 04ແຂວງ ແລະ ພາລະບົດບາດພ້ອມທັງຂັ້ນຕອນການລາຍງານຂອງຜູ້ປະສານງານທາສູນກາງ.

*<u>ວາລະກອງປະຊຸມທີ່ 8</u>* (ວັນເດືອນປີ ກອງປະຊຸມກຸ່ມວິຊາການຄັ້ງໜ້າຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ)
ສຳລັບກອງປະ ຊຸມກຸ່ມວິຊາການຂອງໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ໃນຄັ້ງໜ້າແມ່ນຈະໄດ້ທີ່ຈັດຂຶ້ນເປັນປະຈຳທຸກໆສາມເດືອນ ແລະ ຈະຖືກແຈ້ງໃຫ້ທຸກຜູ້ປະຕິບັດງານໃຫ້ຮັບຮູ້ພາຍຫຼັງ.

ກອງປະຊຸມໄດ້ປິດລົງໃນເວລາ 12 ຕອນບ່າຍ.

| | |
|---|---|
| ຮຽບຮຽງໂດຍ: | ຈັດຕຽມໂດຍ: |
| ທ່ານ ເພັດສະຫວ່າງ ສູນນະລາດ | ທ່ານນາງ. ມະນີຈັນ ແກ້ວລະຄອນ |

ຫ້ອງການ ຄ.ຄ.ຊ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ວັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ( ຄຄຊ)
(ຫ້ອງການ ຄຄຊ)

National Regulatory Authority
for UXO/Mine Action Sector in Lao PDR (NRA)
(NRA Office)

---

## ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມກຸ່ມວິຊາການຂອງ ໜ່ວຍງານຊ່ວຍຜູ້ຖືກເຄາະຮ້າຍ
## ໄດ້ຈັດຂື້ນໃນທີ 29 / 11 / 2010 ທີ່ຫ້ອງປະຊຸມ ຄຄຊ.

| ຊື່ ແລະ ນາມສະກຸນ | ອົງການຈັດຕັ້ງ | ນຳເບີໂທລະສັບ | ທີ່ຢູ່ອີເມວ |
|---|---|---|---|
| ທ່ານ. ເພັດສະຫວ່າງ ສູນນະລາດ | ຮອງອຳນວຍການ/ ຄຄຊ | 55009616 | phetsavang@gmail.com |
| ທ່ານ. ບຸນຕາວ ຈັນທະວົງສາ | ຫົວໜ້າໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ/ຄຄຊ | 2207361 | bountaochanthavongsa@gmail.com |
| ທ່ານນາງ. ມະນີຈັນ ແກ້ວລະຄອນ | ວິຊາການໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ/ຄຄຊ | 2822256 | keolakhone@gmail.com |
| ທ່ານ. ທອງດີ ພົມມະວົງສາ | ຫົວໜ້າໜ່ວຍງານສຶກສາຄວາມສ່ຽງໄພ/ຄຄຊ | 55669803 | Phommavongsa@gmail.com |
| ທ່ານ. ພົມມະຈັນ ຄຳມະນີຈັນ | ຫົວໜ້າໜ່ວຍງານເກັບກູ້/ຄຄຊ | 55693136 | Pmc.Aeod@gmail.com |
| ທ່ານນາງ. ທິບພະຈັນ ສີລັກຄຳ | ຜູ້ຊ່ວຍຫົວໜ້າໜ່ວຍງານໂຄສະນາສຶກສາຄວາມສ່ຽງ/ຄຄຊ | 55908782 | thipphachanh.sylukkham@gmail.con |
| ທ່ານ. ວົງ ນັນທະວົງ | ຫົວໜ້າໜ່ວຍງານປະເມີນຜົນກະທົບທັງຈາກເກັບກູ້ລບຕ/ຄຄຊ | 2636532 | Vong.pcia@gmail.com |
| ທ່ານດຣ. ບຸນໂຮມ ຂັນທະວົງ | ຟື້ນຟູສຸຂະພາບຈິດ ໂຮງໝໍມະໂຫສົດ | 55612148 | |
| ທ່ານ. ກາວິພອນ ສຸທີ | ອົງການກາແດງລາວ | 55682594 | kaviphone@hotmail.com |
| ທ່ານ. ບຸນເນືອງ ສິດາວົງ | ພະແນກພິການ ແລະ ຜູ້ສູງອາຍຸ ກະຊວງແຮງງານ | 99196957 | Bounneung08@yahoo.com |
| ທ່ານ. ສົມເພັດ ອັກຄະວົງ | ສະມາຄົມຄົນພິການແຫ່ງຊາດ | 55610381 | akhavong@yahoo.com |
| ທ່ານດຣ. ວັນນະເລດ ທຳມາວົງສາ | ກົມປິ່ນປົວ/ກະຊວງສາທາ | 55659514 | VNRTMVS@yahoo.com |
| ທ່ານ. ທອງລິດ ສີຫາລົມດິດ | ສູນຟື້ນຟູຄົນພິການແຫ່ງຊາດ | 55526231 | tchtlnrc@yahoo.com |
| ທ່ານນາງ. ບຸນລັນ ໄພບູນ | ອົງການໂຄບ | 55507058 | Cope.project.coordinator@gmail.con |
| ທ່ານນາງ. ພຸດສະດີ ລາວລີ | ສູນພັດທະນາແມ່ຍິງພິການລາວ | 021820489 | laodwdc@gmail.com |
| ທ່ານນາງ. ກິນນາລອນ ນວນວຽງຄຸນ | ສູນພັດທະນາແມ່ຍິງພິການລາວ | 021820489 | laodwdc@gmail.com |
| ທ່ານ. ຄຳຫຼວງ ແກ້ວກາ | ໂຄງການ ອອ໋ກຟາມ | 450870-7 | khamlouang@oxfam.org.au |
| ທ່ານ. ແສງທອງ ວົງສະພັດ | ໂຄງການ ອອ໋ກຟາມ | 54345710 | sengthongv@oxfam.org.au |
| ທ່ານ. ສີມອນ ໄຊຍາສິດ | ສະມາຄົມຊ່ວຍເຫຼືອ,ສົງເຄາະຄົນພິການ ແຫ່ງປະເທດຍີ່ປຸ່ນປະຈຳລາວ | 021 241467 | aarlaos@laopdr.com |

| | | | | |
|---|---|---|---|---|
| | ທ່ານ. ມິກິຫິໂກະ ຟູກູກະ | ສະມາຄົມຊ່ວຍເຫຼືອ,ສົງເຄາະ ຄົນພິການ ແຫ່ງປະເທດຍີ່ປຸ່ນ ປະຈຳລາວ | 021 241467 | aarlaos@laopdr.com |
| | ທ່ານນາງ. ບາບາລາ ລີວິດ | ອົງການເວີດສອີດູນເຄຊັນ | 55521439 | barbaralewislao@gmail.com |
| | ທ່ານນາງ. ຮອນລີ ມີວເລີ | ເຮັກໄອບີ | 77528525 | media.advisor@laos.handicap.be |